| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບຢັ້ງຢືນແຫລ່ງກໍາເນີດ | |
| ປະເພດຂອງໃບອະນຸຍາດ | ໃບຢັ້ງຢືນ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoST-IPD-23 | 02.10.2017 | ກົມຊັບສິນທາງປັນຍາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເພື່ອຢັ້ງຢືນວ່າ ສິນຄ້າດັ່ງກ່າວ ແມ່ນມີແຫລ່ງທີ່ມາຈາກດິນແດນ, ເຂດ ຫລື ທ້ອງຖິ່ນ ໃນ ສປປ ລາວ ຊຶ່ງຈະຊ່ວຍເພີ່ມມູນຄ່າສິນຄ້າ ຈາກແຫລ່ງກໍາເນີດ ແລະ ແຈ້ງໃຫ້ຜູ້ຊົມໃຊ້ຮູ້ເຖິງ ຄຸນສົມບັດດັ່ງກ່າວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ຜູ້ເປັນເຈົ້າຂອງ ສິນຄ້າ ຫລື ບໍລິການ ທີ່ມີຈຸດປະສົງຈະໄດ້ຮັບການຢັ້ງຢືນວ່າ ມີແຫລ່ງກໍາເນີດ ມາກຈາກດິນແດນ, ເຂດ ຫລື ທ້ອງຖິ່ນໃນ ສປປ ລາວ ພາຍໃຕ້ກົດໝາຍຂອງ ສປປ ລາວ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍຈົດທະບຽນຊັບສິນທາງປັນຍາ ຢູ່ ສປປ ລາວ ຕ້ອງໄດ້ມີຕົວແທນ ທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ເພື່ອດໍາເນີນທຸລະກໍາ ທີ່ກ່ຽວຂ້ອງກັບ ວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ 2. ສໍານວນຄໍາຮ້ອງຂໍຈົດທະບຽນ ແລະ ເອກະສານຄັດຕິດອື່ນໆ ສາມາດເຮັດເປັນພາສາລາວ ຫລື ອັງກິດກໍ່ໄດ້. ຖ້າວ່າ ຄໍາຮ້ອງຂໍ ຫລື ເອກະສານ ທີ່ໄດ້ເຮັດເປັນພາສາອັງກິດ, ຕ້ອງຍື່ນສະບັບແປ ເປັນພາສາລາວ ໂດຍໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ພາຍໃນ 90 ວັນຫລັງຈາກວັນໄດ້ຍື່ນຄໍາຮ້ອງຂໍ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ ພິຈາລະນາຄຳຮ້ອງ ໃນ ການອອກໃບອະນຸຍາດ | 60 | |
| ຄຸນະສົມບັດຂອງຜູ້ຂໍໃບ ອະນຸຍາດ | 1. ແຫລ່ງກຳເນີດດັ່ງກ່າວຕ້ອງພາໃຫ້ສິນຄ້າ ມີຄຸນນະພາບ ແລະ ມີຊື່ສຽງ ຫລື ຄຸນລັກສະນະອື່ນ ຍ້ອນແຫລ່ງກຳເນີດນັ້ນ ບໍ່ວ່າຈະເປັນຍ້ອນປັດໄຈຂອງທຳມະຊາດ ຫລື ປັດໄຈຂອງມະນຸດ ເຊັ່ນ ຄວາມຊຳນິຊຳນານ ແລະ ປະສົບການຂອງຜູ້ຜະລິດທີ່ມີມາແບບດັ້ງເດີມ ຂອງ ທ້ອງຖິ່ນນັ້ນ 2. ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງສິດ ມີດັ່ງນີ້: (i) ເປັນພົນລະເມືອງລາວ ຫລື ຜູ້ທີ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫລື ນິຕິບຸກຄົນ ຫລື ການຈັດຕັ້ງທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ; (ii) ບຸກຄົນທີ່ມີສັນຊາດ ຫລື ມີທີ່ຢູ່ອາໄສຢູ່ ປະເທດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ; (iii) ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີສະຖານທີ່ດຳເນີນການຄ້າ ແລະ ອຸດສາຫະກຳຕົວຈິງ ແລະ ມີປະສິດທິຜົນ ຢູ່ໃນອານາເຂດຂອງປະເທດໃດໜຶ່ງ ທີ່ເປັນພາຄີຂອງ ສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍ ໃບອະນຸຍາດ? | ປະຕິເສດ ໃນກໍລະນີ ແຫລ່ງກຳເນີດແມ່ນບໍ່ໄດ້ຕາມເງື່ອນໄຂທີ່ກຳນົດ ຫລື ເປັນແຫລ່ງກຳເນີດທີ່ບໍ່ສາມາດຈົດທະບຽນຕາມທີ່ກຳນົດໄວ້ໃນກົດໝາຍ (ເຊັ່ນ ເປັນແຫລ່ງກຳເນີດ ທີ່ພາໃຫ້ເກີດຄວາມເຂົ້າໃຈຜິດ ຫລື ສັບສົນ ກ່ຽວກັບ ແຫລ່ງທີ່ມາຂອງສິນຄ້າດັ່ງກ່າວ, ຊື່ຂອງແຫລ່ງກຳເນີດ ກາຍເປັນຊື່ສິນຄ້າ ທີ່ເປັນປະເພນີແລ້ວໃນ ສປປ ລາວ) | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກຳນົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ? |
| ບໍ່ມີ | 0 |
| ຂັ້ນຕອນ ແລະ ເງື່ອນໄຂ ສຳລັບການຕໍ່ອາຍຸໃບ ອະນຸຍາດ | |

| ຄ່າທຳນຽມ | | | | |
|---|---|---|---|---|
| ມີຄ່າທຳນຽມ ແບບຟອມຄຳ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາ ການ | ຄ່າທຳນຽມ | ຄ່າ ແບບຟອມ ຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |

| ຄ່າທໍານຽມ | | | | |
|---|---|---|---|---|
| ແມ່ນແລ້ວ | 0.00 | 200000.00 | 0.00 | 200000.00 |
| **ຄໍາເຫັນ** | ອີງຕາມ ລັດຖະດໍາລັດ ເລກທີ 03/ປປທ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາເຫັນ** | | | | |

| ນິຕິກໍາທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ນິຕິກໍາ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ (ສະບັບປັບປຸງ) | 01/ສພຊ | 20.12.2011 | ພາກທີ III ຊັບສິນອຸດສາຫະກໍາ ໝວດທີ 1 ເງື່ອນໄຂຂອງຊັບສິນອຸດສາຫະກໍາ (ມາດຕາ 18) ໝວດທີ 2 ຊັບສິນອຸດສາຫະກໍາທີ່ບໍ່ສາມາດຈົດທະບຽນ (ມາດຕາ 25) ໝວດທີ 3 ການປົກປ້ອງຊັບສິນອຸດສາຫະກໍາ (ມາດຕາ 26, 27, 31, 37 ຫາ 41) ໝວດທີ 5 ອາຍຸການປົກປ້ອງຊັບສິນອຸດສາຫະກໍາ (ມາດຕາ 53) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບຢັ້ງຢືນການຊໍາລະຄ່າທໍານຽມ |
| ຫຼັກຖານການຢັ້ງຢືນການປົກປ້ອງແຫຼ່ງກໍາເນີດ ຢູ່ໃນປະເທດຕົ້ນກໍາເນີດ. |
| ເອກະສານອື່ນໆທີ່ກ່ຽວຂ້ອງ |

## ລາຍລະອຽດຂໍ້ມູນ ສຳລັບ ໃບອະນຸຍາດ
## ໂຄງການທົບທວນ ແລະ ປັບປຸງລະບຽບການທີ່ຕິດພັນກັບ ການສ້າງຕັ້ງທຸລະກິດ ໃນ ສປປ ລາວ

| ເອກະສານປະກອບ |
| --- |
| ຂໍ້ມູນເພີ່ມເຕີມອື່ນໆຖ້າມີ |
| ປຶດສັງເຂບ |
| ຮູບແຕ້ມ |
| ໜັງສືມອບສິດ |
| ໃບຄໍາຮ້ອງ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
| --- | --- | --- |
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2017 | | |
| 2016 | | |